ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຜົ້ງສາລີ
ເຈົ້າແຂວງ

ເລກທີ .02..../ຈຂ.ຜລ.
ຜົ້ງສາລີ,ວັນທີ 9 / 2 /2016

# ຄຳສັ່ງແນະນຳເພີ່ມເຕີມ

## ກ່ຽວກັບການຈັດຕັ້ງປະຕິບັດ ຄຳສັ່ງ ຂອງນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີ ການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຕ້ານການ ລັກລອບປູກຝິ່ນຄືນໃໝ່ສະບັບເລກທີ 36/ນຍ, ລົງວັນທີ 12 ສິງຫາ 2014

-------------------------------------

- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ, ສະບັບເລກທີ 10/ ສພຊ. ລົງວັນທີ 25 ທັນວາ 2007.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 36/ນຍ, ລົງວັນທີ 12 ສິງຫາ 2014 ແລະ ຄຳແນະນຳ, ສະບັບເລກທີ 01/ນຍ, ລົງວັນທີ15/1/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ, ສະບັບເລກທີ1920/ຫລບ.ກລຂ ນະຄອນຫລວງວຽງຈັນ, ວັນທີ 16/11/2015 ແລະ ແຈ້ງການ, ສະບັບເລກທີ2135/ຫລບ.ກລຂ, ນະຄອນຫລວງວຽງຈັນ ວັນທີ 25/12/2015. ກ່ຽວກັບການແກ້ໄຂການລັກລອບປູກຝິ່ນ ຂອງປະຊາຊົນ ສຳລັບສົກປີ 2015-2016.

ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ຕ້ານການລັກລອບປູກຝິ່ນຂອງປະຊາຊົນໄດ້ດຳເນີນໄປຕາມຄຳສັ່ງຂອງທ່ານນາຍົກ, ສະບັບເລກທີ 36/ນຍ ແລະ ແຈ້ງການ, ສະບັບເລກທີ2135/ຫລບ.ກລຂ ແລະ ຄຳສັ່ງແນະນຳຂອງທ່ານເຈົ້າແຂວງ ສະບັບເລກທີ 26/ຈຂ.ຜລ, ລົງວັນທີ 20 ພະຈິກ 2014.

## ເຈົ້າແຂວງ ອອກຄຳສັ່ງແນະນຳເພີ່ມເຕີມດັ່ງນີ້:

1). ໃຫ້ເຈົ້າເມືອງທຸກໆເມືອງ, ຄະນະຮັບຜິດຊອບຊີ້ນຳການແກ້ໄຂຄວາມບໍ່ສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ຂັ້ນແຂວງ-ຂັ້ນເມືອງ, ເຈົ້າໜ້າທີ່ພາກສ່ວນກ່ຽວຂ້ອງທຸກຂັ້ນຕ້ອງກຳແໜ້ນ, ແກ້ໄຂບັນຫາສິ່ງເສບຕິດທຸກປະເພດໃຫ້ຖືກຕ້ອງຕາມກົດໝາຍ ຂອງ ສ ປປ ລາວ ກຳນົດໄວ້.

2). ວິທີການ ແລະ ຂັ້ນຕອນຈັດຕັ້ງປະຕິບັດວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ. ສຳລັບຜູ້ເສບ, ຜູ້ຊື້ຂາຍຢາເສບຕິດ, ມີໄວ້ໃນຄອບຄອງ ທີ່ຫຼຸດຈາກການກຳນົດທາງກົດໝາຍ (ຢາບ້າ1ເມັດ) ມີນ້ຳໜັກເທົ່າກັບ 0,01ກຼາມ. ເຊິ່ງກົດ

ໝາຍໄດ້ກຳນົດ, ນັບແຕ່ 0,03 ກຼາມ, ຫຼຸດຈາກ 3 ເມັດລົງມາ ແມ່ນໃຫ້ສຶກສາອົບຮົມ ກ່າວເຕືອນ ສ້າງບົດປະຕິຍານ ເປັນລາຍລັກອັກສອນ ແລະ ແກ້ໄຂທາງບໍລິຫານຄືດັ່ງນີ້:

- ປະເພດເຮໂຣອີນ 1.500.000 ກີບ ຕໍ່ 1 ກອກນ້ອຍ.
- ປະເພດ ຢາບ້າ 500.000 ກີບ ຕໍ່ 1 ເມັດ.
- ປະເພດຝິ່ນດິບ, ບຸກຄົນໃດຫາກຜະລິດ ຫຼື ມີຝິ່ນໄວ້ໃນຄອບຄອງ, ຄ້າຂາຍ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ,ຂົນສົ່ງ ຫຼື ນຳຝິ່ນ ຜ່ານ ສປປ ລາວ. ເພື່ອຄ້າຂາຍຈຳນວນຕໍ່າກ່ວາ 1 KG (1 ກິໂລກຼາມ ) ຈະຖືກລົງໂທດຕັດອິດສະລະພາບ ແຕ່ສອງປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່1.000.000ກີບ ຫາ 10.000.000ກີບ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ. ນອກຈາກການກຳນົດໃນຄຳສັ່ງແນະນຳສະບັບນີ້, ລ້ວນແຕ່ຖືກຈັດຕັ້ງປະຕິບັດ ຕາມກົດໝາຍວ່າດ້ວຍການປັບປຸງມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75,76 ຂອງກົດ ໝາຍວ່າດ້ວຍຢາເສບຕິດໄດ້ກຳນົດ.

3). ບຸກຄົນ ຫຼື ຄອບຄົວໃດ ຫາກ ຜະລິດ ເປັນການລະເມີດ ລັກລອບປູກຝິ່ນ ແຕ່ຄັ້ງທີສອງ ( ຫຼືເປັນການລະເມີດລັກລອບປູກຝິ່ນເປັນປີທີສອງຈະຖືກປັບໃໝ່10.000.000 ກີບຕໍ່ຄອບຄົວ. ແລ້ວໃຫ້ທຳລາຍຕົ້ນຝິ່ນຖິ້ມ, ບໍ່ຕັດອິດສະລະພາບ)ແຕ່ຕ້ອງຊອກໃຫ້ໄດ້ບຸກຄົນຫືອໂປ້ຕືອການພາຍໃນບ້ານ, ອີງການແນວໂຮມບ້ານ, ເລຂານາຍບ້ານ, ບ້ານທີ່ມີການລັກລອບປູກຝິ່ນໄດ້ມາຮັບການສຶກສາອົບຮົມວຽກງານແນວຄິດ, ເພື່ອສ້າງຄວາມເຂົ້າໃຈ, ຮູ້ເຖິງລະບຽບກົດໝາຍບ້ານເມືອງທີ່ລັດໄດ້ວາງອອກ. ແຕ່ການເຮັດວຽກງານແນວຄິດ ຢູ່ແຕ່ລະທ້ອງຖິ່ນນັ້ນ ໃຫ້ປະຕິບັດຕາມແຕ່ລະເປົ້າໝາຍດັ່ງນີ້.

- ເປົ້າໝາຍທີໜຶ່ງ: ເລືອກເຟັ້ນມາຈາກແຕ່ລະບ້ານ ເຊິ່ງແມ່ນບຸກຄົນຫືອໂປ້ຕືອການ - ແນວໂຮມບ້ານ.
- ເປົ້າໝາຍທີສອງ: ເລຂານາຍບ້ານ ບັນດາບ້ານທີ່ມີການລັກລອບປູກຝິ່ນເຂົ້າມາສຶກສາອົບຮົມ ທາງດ້ານເນື່ອມອບໃຫ້ພາກສ່ວນກ່ຽວຂ້ອງຂັ້ນເມືອງ ເປັນຜູ້ກະກຽມເພື່ອນຳໄປຜັນຂະຫຍາຍຕາມເປົ້າໝາຍ ແລະ ຂຽນໃບປະຕິຍານຕົນ ເພື່ອເປັນບ່ອນອີງໃນການຕິດຕາມ.
- ສະຖານທີ່ ການຈັດອົບຮົມ ສາມາດຈັດໄດ້ຕາມຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ.

4). ສຳລັບບຸກຄົນທີ່ສັງກັດໃນຖັນແຖວການຈັດຕັ້ງຂອງລັດ, ບຸກຄົນທີ່ສັງກັດໃນກົມກອງທະຫານ, ຕຳຫຼວດ, ຖ້າບຸກຄົນໃດຫາກມີການພົວພັນກັບບັນຫາຢາເສບຕິດປະເພດຕ່າງໆ ແມ່ນມອບໃຫ້ກົມກອງທ້ອງຖິ່ນດັ່ງກ່າວເປັນຜູ້ຕິດຕາມກວດກາ, ສຶກສາອົບຮົມ ແລະ ກ່າວເຕືອນຜູ້ກ່ຽວ ແຕ່ຜູ້ກ່ຽວບໍ່ຍອມປ່ຽນແປງກໍ່ຈະຖືກປະຕິບັດວິໄນທາງບໍລິຫານ ອອກຈາກການຈັດຕັ້ງຂອງລັດ, ລັດບໍ່ມີການພິຈາລະນາ ຫຼື ນະໂຍບາຍແຕ່ປະກັນໃດ.

5). ການເກັບມ້ຽນ ແລະ ການຮັກສາເງິນຈາກການປັບໃໝ ແລະ ການແກ້ໄຂຄະດີ ທີ່ພົວພັນກັບບັນຫາຢາເສບຕິດທຸກໆການແກ້ໄຂທີ່ພົວພັນກັບບັນຫາຢາເສບຕິດ,ຈາກການປັບໃໝຂອງການແກ້ໄຂຝິ່ນ, ການດຳເນີນຄະດີກ່ຽວກັບຢາເສບຕິດເປັນຕົ້ນ: ການຂາຍຊັບສິນ, ພາຫະນະ, ອຸປະກອນ ແລະ ຄ່າປັບໃໝທີ່ສານປະຊາຊົນໄດ້ຕັດສິນ ຫຼື ພິພາກສາແລ້ວໃຫ້ປະຕິບັດ ຕາມດຳລັດຂອງລັດຖະບານ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ສະບັບເລກທີ 267/ ລບ, ລົງວັນທີ 5/8/2014.

6). ກວດກາຄືນໃນຄວາມຮັບຜິດຊອບ ຂອງຄະນະພັກຂັ້ນຕ່າງໆ ຢູ່ບັນດາເມືອງ, ລົງຊີ້ນຳຢູ່ແຕ່ລະກຸ່ມບ້ານໃນຄວາມຮັບຜິດຊອບຂອງຕົນໄດ້ຮັບການແກ້ໄຂສະພາບການປູກ, ການຊື້, ການຂາຍ, ຫັນເອົາວຽກງານກວດກາ ແລະ ຄວບຄຸມຢາເສບຕິດ,ຕິດພັນກັບວຽກງານສາມສ້າງຂອງແຂວງ, ຂອງເມືອງ, ຕິດພັນກັບການສ້າງບ້ານພັດທະນາ,ສ້າງບ້ານປອດຄະດີປອດເສບຕິດ, ຕາມທີ່ໄດ້ຮັບຮອງໃນແຜນດຳເນີນງານຂອງ (ກຄສ)ຂັ້ນແຂວງ ຢ່າງໜ້ອຍສ້າງໃຫ້ໄດ້ 70 ຂອງຈຳນວນບ້ານໃນຄວາມຮັບຜິດຊອບຂອງຕົນເອງ. ຕາມມາດຖານ ແລະ ເງື່ອນໄຂຂອງບົດແນະນຳ ກ່ຽວກັບການສ້າງຄອບຄົວ ແລະ ປອດເສບຕິດ, ສະບັບເລກທີ 169/ກຄສ. ຄັ້ງວັນທີ 19/ 9 / 2012 ກຄສ. ເພື່ອຮັບຮອງຢັ້ງຢືນເປັນບ້ານປອດເສບຕິດ ຢ່າງເປັນທາງການ.

7). ຄັດເລືອກບຸກຄົນ, ກົມກອງ, ບ້ານ ແລະ ກຸ່ມບ້ານດີເດັ່ນ ທີ່ໄດ້ປະກອບສ່ວນເຂົ້າໃນການແກ້ໄຂບັນຫາຢາເສບຕິດ ປະຈຳສົກປີ2014-2015 ເຫັນວ່າມີຄວາມສຳເລັດຕາມຄວາມຮັບຜິດຊອບຂອງຕົນໃຫ້ລາຍງານໄປຍັງພາກສ່ວນກ່ຽວຂ້ອງ ເພື່ອ ນຳສະເໜີຂັ້ນເທິງຄົ້ນຄ້ວາ ແລະ ປະຕິບັດຍ້ອງຍໍຢ່າງສົມກຽດ.

8). ເພື່ອຮັບປະກັນໃຫ້ແກ່ການປະຕິບັດນະໂຍບາຍ ສຳລັບບຸກຄົນຜູ້ຖືກເຄາະຮ້າຍກັບບັນຫາຢາເສບຕິດ ໄດ້ຮັບການບຳບັດ-ປິ່ນປົວ ຕາມສະຖານທີ່ ແລະ ຊຸມຊົນຕ່າງໆ ສຳລັບປະເພດຝິ່ນ.

- ກະກຽມຄວາມພ້ອມຂອງຊຸມຊົນສະຖານທີ່ຮອງຮັບໃນການບຳບັດ-ປິ່ນປົວ ຈະແມ່ນໂຮງໝໍບັນດາເມືອງ ສຸກສາລາ ແຫ່ງ ຕ່າງໆ ຕາມຄວາມເໝາະສົມ ຂອງແຕ່ລະທ້ອງຖິ່ນ.
- ສຳລັບການໃຊ້ຈ່າຍສິ້ນເປືອງໄປ-ມາ, ຢູ່ກິນ,ພັກເຊົາ ໃນໄລຍະ ຢູ່ບຳບັດ ເປັນຄວາມຮັບຜິດຊອບຂອງ ຄອບຄົວ ຫຼື ຄວາມຮັບຜິດຊອບຂອງຜູ້ປົກຄອງຂາດຕົວ.

9). ຂະແໜງວິຊາການແພດໝໍ, ເຈົ້າໜ້າທີ່ຂັ້ນເມືອງ ປ້ອງກັນຮັກສາຄວາມປອດໄພ ແລະ ໃຫ້ການບຳບັດ-ປິ່ນປົວເພື່ອ ຟື້ນຟູສຸຂະພາບຂອງຜູ້ຕິດຢາເສບຕິດໃຫ້ກັບຄືນສູ່ປົກະຕິ.

10). ຂະແໜງການ (ກຄສ) ແລະ ພາກສ່ວນກ່ຽວຂ້ອງຂອງລັດ ຕ້ອງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກດ້ານຢາ ບຳບັດ-ປິ່ນປົວ (ຢາTO ເມັດ) ຢາປິ່ນປົວອາການ ເປັນນະໂຍບາຍປິ່ນປົວ ໂດຍບໍ່ໄດ້ລ່າຍຄ່າ.

11). ຄຳສັ່ງແນະນຳ ສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ຄຳເຈນ ວົງໂພສີ